# [ໃສ່ຊື່ຜູ້ໃຫ້ບໍລິການທີ່ຢູ່ອາໄສທີ່ກວມເອົາ]

# ແຜນການຍ້າຍສຸກເສີນຕົວຢ່າງສໍາລັບຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ

## ການຍ້າຍສຸກເສີນ

**[ໃສ່ຊື່ຜູ້ໃຫ້ບໍລິການທີ່ຢູ່ອາໄສທີ່ກວມເອົາ (ຕົວຫຍໍ້ HP ສໍາລັບຈຸດປະສົງຂອງແຜນການຕົວຢ່າງນີ້)]**
ມີຄວາມກັງວົນໃຈກ່ຽວກັບຄວາມປອດໄພຂອງຜູ້ເຊົ່າຂອງຕົນ ແລະ ຄວາມກັງວົນໃຈດັ່ງກ່າວກວມໄປຮອດຜູ້ເຊົ່າທີ່ແມ່ນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ. ອີງຕາມກົດໝາຍວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງ (VAWA),[1] HP ອະນຸຍາດໃຫ້ຜູ້ເຊົ່າທີ່ເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ຮ້ອງຂໍການຍ້າຍສຸກເສີນຈາກຫ້ອງເຊົ່າປັດຈຸບັນຂອງຜູ້ເຊົ່າໄປຫ້ອງເຊົ່າເຮືອນ. ຄວາມສາມາດຮ້ອງຂໍການຍ້າຍນີ້ມີໃຫ້ແກ່ທຸກຄົນໂດຍບໍ່ສົນເລື່ອງເພດ, ລັກສະນະທາງເພດ ຫຼື ລົດສະນິຍົມທາງເພດ.[2] ແນວໃດກໍຕາມ ຄວາມສາມາດຂອງ HP ໃນການປະຕິບັດຕາມຄໍາຮ້ອງຂໍດັ່ງກ່າວສໍາລັບຜູ້ເຊົ່າທີ່ປັດຈຸບັນໄດ້ຮັບການຊ່ວຍເຫຼືອ ອາດຈະຂຶ້ນກັບການຕັດສິນກໍານົດໃນເບື້ອງຕົ້ນວ່າຜູ້ເຊົ່າແມ່ນ ຫຼື ເຄີຍແມ່ນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນຫຼືບໍ່, ແລະ ຂຶ້ນກັບວ່າ HP ມີບ່ອນຢູ່ອາໄສອື່ນທີ່ພ້ອມໃຫ້ເຂົ້າຢູ່ ແລະ ປອດໄພເພື່ອສະໜອງໃຫ້ແກ່ຜູ້ເຊົ່ານັ້ນເປັນບ່ອນຢູ່ອາໄສຊົ່ວຄາວ ຫຼື ຖາວອນກວ່າຫຼືບໍ່.

---

[1] ເຖິງແມ່ນກົດໝາຍຈະມີຊື່ແນວນີ້ກໍຕາມ, ແຕ່ການປົກປ້ອງຕາມກົດໝາຍ VAWA ມີໃຫ້ແກ່ຜູ້ເຄາະຮ້າຍທຸກຄົນຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ແລະ ການຕິດຕາມກໍ່ກວນ ໂດຍບໍ່ສົນເລື່ອງເພດ, ລັກສະນະທາງເພດ ຫຼື ລົດສະນິຍົມທາງເພດ.
[2] ຜູ້ໃຫ້ບໍລິການທີ່ຢູ່ອາໄສບໍ່ສາມາດເລືອກປະຕິບັດໂດຍອີງໃສ່ລັກສະນະທີ່ໄດ້ຮັບການປົກປ້ອງ ລວມທັງເຊື້ອຊາດ, ສີຜິວ, ຊາດກໍາເນີດ, ສາສະໜາ, ເພດ, ສະຖານະຄອບຄົວ, ຄວາມພິການ ຫຼື ອາຍຸໄດ້. ທີ່ຢູ່ອາໄສທີ່ HUD ໃຫ້ການຊ່ວຍເຫຼືອ ແລະ HUD ໃຫ້ປະກັນໄພ ຕ້ອງເຮັດໃຫ້ມີໃຫ້ແກ່ທຸກຄົນທີ່ມີສິດຢູ່ອາໄສໂດຍບໍ່ຄໍານຶງເຖິງລົດສະນິຍົມທາງເພດ, ລັກສະນະທາງເພດ ຫຼື ສະຖານະການແຕ່ງງານຕົວຈິງ ຫຼື ທີ່ຮັບຮູ້.

ແຜນການນີ້ລະບຸຜູ້ເຊົ່າທີ່ມີສິດໄດ້ຮັບການຍ້າຍສຸກເສີນ, ເອກະສານທີ່ຈຳເປັນສຳລັບການຮ້ອງຂໍການຍ້າຍສຸກເສີນ, ການປົກປ້ອງຄວາມລັບ, ການຍ້າຍສຸກເສີນອາດຈະເກີດຂຶ້ນໄດ້ແນວໃດ ແລະ ຄຳແນະນຳສຳລັບຜູ້ເຊົ່າກ່ຽວກັບຄວາມປອດໄພ ແລະ ການຮັກສາຄວາມປອດໄພ. ແຜນການນີ້ອີງໃສ່ແຜນການຍ້າຍສຸກເສີນຕົວຢ່າງທີ່ເຜີຍແຜ່ໂດຍກະຊວງທີ່ຢູ່ອາໄສ ແລະ ການພັດທະນາຕົວເມືອງຂອງສະຫະລັດ (HUD) ເຊິ່ງໜ່ວຍງານລັດຖະບານກາງທີ່ຕິດຕາມກວດກາວ່າ **[ໃສ່ຊື່ຂອງໂຄງການ ຫຼື ການຊ່ວຍເຫຼືອຄ່າເຊົ່າຢູ່ບ່ອນນີ້]** ປະຕິບັດຕາມກົດໝາຍ VAWA.

## ການມີສິດໄດ້ຮັບການຍ້າຍສຸກເສີນ

ຜູ້ເຊົ່າທີ່ເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ, ຕາມທີ່ກຳນົດໄວ້ໃນກົດລະບຽບຂອງ HUD ຢູ່ພາກ 24 CFR, ພາກຍ່ອຍ L ມີສິດໄດ້ຮັບການຍ້າຍສຸກເສີນ ຖ້າ: ຜູ້ເຊົ່ານັ້ນເຊື່ອມີເຫດຜົນວ່າມີໄພອັນຕະລາຍທີ່ຈະເກີດຂຶ້ນຈາກຄວາມຮຸນແຮງເພີ່ມເຕີມຖ້າຜູ້ເຊົ່າຍັງຄົງຢູ່ພາຍໃນຫ້ອງຫຼືເຮືອນເຊົ່າດຽວກັນນັ້ນ. ຖ້າຜູ້ເຊົ່າແມ່ນຜູ້ເຄາະຮ້າຍຈາກການລ່ວງລະເມີດທາງເພດ, ຜູ້ເຊົ່າອາດຈະມີສິດຍ້າຍເຊັ່ນກັນ ຖ້າການລ່ວງລະເມີດທາງເພດເກີດຂຶ້ນຢູ່ອາຄານນັ້ນພາຍໃນໄລຍະ 90 ວັນຕາມເວລາປະຕິທິນກ່ອນການຮ້ອງຂໍການຍ້າຍສຸກເສີນ.

ຜູ້ເຊົ່າທີ່ຮ້ອງຂໍການຍ້າຍສຸກເສີນຕ້ອງຮ້ອງຂໍການຍ້າຍຢ່າງຈະແຈ້ງໂດຍປະຕິບັດຕາມຂັ້ນຕອນທີ່ອະທິບາຍໄວ້ໃນແຜນການນີ້.

ຜູ້ເຊົ່າຜູ້ທີ່ບໍ່ຢູ່ໃນສະຖານະທີ່ດີອາດຈະຍັງຮ້ອງຂໍການຍ້າຍສຸກເສີນໄດ້ເຊັ່ນກັນ ຖ້າພວກເຂົາຕອບສະໜອງໄດ້ຂໍ້ກຳນົດການມີສິດໃນຂໍ້ນີ້.

## ເອກະສານສຳລັບການຮ້ອງຂໍການຍ້າຍສຸກເສີນ

ເພື່ອຮ້ອງຂໍການຍ້າຍສຸກເສີນ, ຜູ້ເຊົ່າຈະຕ້ອງແຈ້ງບອກຫ້ອງການຄຸ້ມຄອງຂອງ HP ແລະ ສົ່ງຄຳຮ້ອງຂໍການຍ້າຍເປັນລາຍລັກອັກສອນຫາ **[HP ໃສ່ສະຖານທີ່]**. HP ຈະໃຫ້ການອຳນວຍຄວາມສະດວກທີ່ສົມເຫດສົມຜົນຕໍ່ກັບນະໂຍບາຍນີ້ສຳລັບບຸກຄົນທີ່ພິການ. ຄຳຮ້ອງຂໍການຍ້າຍສຸກເສີນເປັນລາຍລັກອັກສອນຂອງຜູ້ເຊົ່າຄວນລວມມີ:

1. ຄໍາຖະແຫຼງທີ່ສະແດງໃຫ້ເຫັນວ່າຜູ້ເຊົ່າເຊື່ອຢ່າງມີເຫດຜົນວ່າມີໄພອັນຕະລາຍທີ່ຈະເກີດຂຶ້ນຈາກຄວາມຮຸນແຮງເພີ່ມເຕີມຖ້າຜູ້ເຊົ່າຍັງຄົງຢູ່ໃນບ່ອນຢູ່ເກົ່າທີ່ໄດ້ຮັບການຊ່ວຍເຫຼືອພາຍໃຕ້ໂຄງການຂອງ HP; ຫຼື
2. ຄໍາຖະແຫຼງວ່າຜູ້ເຊົ່າແມ່ນຜູ້ເຄາະຮ້າຍຈາກການລ່ວງລະເມີດທາງເພດ ແລະ ການລ່ວງລະເມີດທາງເພດເກີດຂຶ້ນຢູ່ອາຄານນັ້ນໃນລະຫວ່າງໄລຍະ 90 ວັນຕາມເວລາປະຕິທິນກ່ອນການຮ້ອງຂໍການຍ້າຍສຸກເສີນຂອງຜູ້ເຊົ່າ.

## ການຮັກສາຄວາມລັບ

HP ຈະຮັກສາຄວາມລັບຂອງທຸກຂໍ້ມູນທີ່ຜູ້ເຊົ່າສົ່ງມາເພື່ອຮ້ອງຂໍການຍ້າຍສຸກເສີນ ແລະ ຂໍ້ມູນກ່ຽວກັບການຍ້າຍສຸກເສີນ, ເວັ້ນເສຍແຕ່ວ່າຜູ້ເຊົ່າໃຫ້ການອະນຸຍາດເປັນລາຍລັກອັກສອນແກ່ HP ເພື່ອເປີດເຜີຍຂໍ້ມູນດັ່ງກ່າວໂດຍມີຂີດຈໍາກັດເວລາ ຫຼື ການເປີດເຜີຍຂໍ້ມູນດັ່ງກ່າວແມ່ນຈໍາເປັນຕາມກົດໝາຍ ຫຼື ຈໍາເປັນ ສໍາລັບການໃຊ້ໃນການດໍາເນີນຄະດີເລື່ອງການໄລ່ອອກຈາກບ່ອນເຊົ່າ ຫຼື ການໄຕ່ສວນກ່ຽວກັບການຢຸດເຊົາການຊ່ວຍເຫຼືອຈາກໂຄງການທີ່ຢູ່ພາຍໃຕ້ການຄຸ້ມຄອງ. ນີ້ລວມມີການຮັກສາຄວາມລັບຂອງບ່ອນຢູ່ ໃໝ່ຂອງຜູ້ເຊົ່າ, ຖ້າມີການໃຫ້ບ່ອນຢູ່ໃໝ່, ຈາກບຸກຄົນທີ່ກະທໍາຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນຕໍ່ກັບຜູ້ເຊົ່າ. ເບິ່ງໃບແຈ້ງການກ່ຽວກັບສິດທິການຢູ່ອາໄສພາຍໃຕ້ກົດໝາຍວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງສໍາລັບຜູ້ເຊົ່າທຸກຄົນ ສໍາລັບຂໍ້ມູນກ່ຽວກັບຄວາມຮັບຜິດຊອບຂອງ HP ໃນການຮັກສາຄວາມລັບຂໍ້ມູນຕ່າງໆທີ່ກ່ຽວຂ້ອງກັບເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ.

## ກໍານົດເວລາ ແລະ ການມີໃຫ້ຂອງການຍ້າຍສຸກເສີນ

HP ບໍ່ສາມາດຮັບປະກັນວ່າຄໍາຮ້ອງຂໍການຍ້າຍຈະໄດ້ຮັບອະນຸມັດ ຫຼື ມັນຈະໃຊ້ເວລາດົນປານໃດໃນການດໍາເນີນຄໍາຮ້ອງຂໍການຍ້າຍ. ແນວໃດກໍ່ຕາມ, HP ຈະດໍາເນີນການຢ່າງວ່ອງໄວທີ່ສຸດເພື່ອຍ້າຍຜູ້ເຊົ່າທີ່ເປັນຜູ້ເຄາະຮ້າຍຂອງຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນໄປບ່ອນຢູ່ອື່ນ, ໂດຍຂຶ້ນກັບການມີຢູ່ ແລະ ຄວາມປອດໄພຂອງບ່ອນຢູ່ໃໝ່. ຖ້າຜູ້ເຊົ່າເຊື່ອຢ່າງມີເຫດຜົນວ່າການຍ້າຍທີ່ສະເໜີມາຈະບໍ່ປອດໄພ, ຜູ້ເຊົ່າສາມາດຮ້ອງຂໍການຍ້າຍໄປບ່ອນໃໝ່ໄດ້. ຖ້າຫ້ອງເຊົ່າມີໃຫ້, ຜູ້ເຊົ່າທີ່ຖືກຍ້າຍຕ້ອງ

ເຫັນດີປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂທີ່ຄວບຄຸມການຢູ່ອາໄສໃນບ່ອນຢູ່ທີ່ຜູ້ເຊົ່າຖືກຍ້າຍເຂົ້າມານັ້ນ. HP ບໍ່ສາມາດຍ້າຍຜູ້ເຊົ່າໄປຫ້ອງເຊົ່າສະເພາະໃດໜຶ່ງໄດ້ ຖ້າຜູ້ເຊົ່າຍັງບໍ່ທັນ ຫຼື ບໍ່ສາມາດກຳນົດການມີສິດສຳລັບຫ້ອງເຊົ່ານັ້ນ.

ຖ້າ HP ບໍ່ມີຫ້ອງເຊົ່າທີ່ປອດໄພ ແລະ ມີໃຫ້ສຳລັບຜູ້ເຊົ່າທີ່ຕ້ອງການການຍ້າຍສຸກເສີນມີສິດໄດ້ຮັບ, HP ຈະຊ່ວຍຜູ້ເຊົ່າໃນການຊອກຫາຜູ້ໃຫ້ບໍລິການທີ່ຢູ່ອາໄສອື່ນຜູ້ທີ່ອາດຈະມີຫ້ອງເຊົ່າທີ່ປອດໄພ ແລະ ມີໃຫ້ເພື່ອໃຫ້ຜູ້ເຊົ່ານັ້ນສາມາດຍ້າຍໄປຢູ່ໄດ້.  ຕາມການຮ້ອງຂໍຂອງຜູ້ເຊົ່າ, HP ຍັງຈະຊ່ວຍຜູ້ເຊົ່າໃນການຕິດຕໍ່ກັບອົງການທ້ອງຖິ່ນທີ່ໃຫ້ການຊ່ວຍເຫຼືອແກ່ຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນທີ່ຕິດຄັດກັບແຜນການນີ້.

## ຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຜູ້ເຊົ່າ

ໃນລະຫວ່າງລໍຖ້າການດຳເນີນການຍ້າຍ ແລະ ການຍ້າຍຕົວຈິງ, ຖ້າມັນໄດ້ຮັບອະນຸມັດ ແລະ ເກີດຂຶ້ນ, ຜູ້ເຊົ່າໄດ້ຮັບການສົ່ງເສີມໃຫ້ດຳເນີນທຸກຄວາມລະມັດລະວັງຢ່າງສົມເຫດສົມຜົນເພື່ອໃຫ້ປອດໄພ.

ພວກເຮົາສົ່ງເສີມໃຫ້ຜູ້ເຊົ່າທີ່ເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ ຕິດຕໍ່ຫາສາຍດ່ວນຄວາມຮຸນແຮງໃນຄອບຄົວແຫ່ງຊາດທີ່ເບີ 1-800-799-7233 ຫຼື ສູນລີ້ໄພຄວາມຮຸນແຮງໃນຄອບຄົວປະຈຳທ້ອງຖິ່ນເພື່ອຂໍຄວາມຊ່ວຍເຫຼືອໃນການສ້າງແຜນການຄວາມປອດໄພ. ສຳລັບບຸກຄົນທີ່ມີຄວາມບົກຜ່ອງດ້ານການໄດ້ຍິນ, ສາມາດໃຊ້ບໍລິການສາຍດ່ວນນີ້ໄດ້ໂດຍການໂທຫາເບີ 1-800-787-3224 (TTY).

ຜູ້ເຊົ່າທີ່ເຄີຍເປັນຜູ້ເຄາະຮ້າຍຈາກການລ່ວງລະເມີດທາງເພດອາດຈະໂທຫາສາຍດ່ວນການລ່ວງລະເມີດທາງເພດແຫ່ງຊາດຂອງເຄືອຂ່າຍແຫ່ງຊາດຕ້ານການຂົ່ມຂືນ, ການທາລຸນ ແລະ ການຮ່ວມເພດທີ່ຜິດສິນລະທຳທີ່ເບີ 800-656-HOPE ຫຼື ເຂົ້າຫາສາຍດ່ວນທາງອອນລາຍໄດ້ທີ່ https://ohl.rainn.org/online/.

ຜູ້ເຊົ່າຜູ້ທີ່ເປັນ ຫຼື ເຄີຍເປັນຜູ້ເຄາະຮ້າຍຂອງການຕິດຕາມກໍ່ກວນທີ່ຊອກຫາຄວາມຊ່ວຍເຫຼືອສາມາດເຂົ້າຫາສູນແຫຼ່ງຊ່ວຍເຫຼືອເລື່ອງການຕິດຕາມກໍ່ກວນຂອງສູນແຫ່ງຊາດສຳລັບຜູ້ເຄາະຮ້າຍຈາກອາຊະຍາກຳໄດ້ທີ່ https://www.victimsofcrime.org/our-programs/stalking-resource-center.

**ເອກະສານຕິດຄັດ:** ອົງການທ້ອງຖິ່ນທີ່ໃຫ້ການຊ່ວຍເຫຼືອແກ່ຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ.